ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC

ທັນສະໄໝ ວ່ອງໄວ ໝັ້ນໃຈ
Modern Quick Reliable

ສຳນັກງານໃຫຍ່

ເລກທີ : 1705 /ທຄຕລ 2023

ນະຄອນຫລວງວຽງຈັນ, ວັນທີ: 11/05/2023

# ໜັງສືແຈ້ງເຊີນ

**ເຖິງ:** ບັນດາ,ບໍລິສັດ ຫ້າງຮ້ານຕົວແທນຈຳໜ່າຍ ສິນຄ້າເຄື່ອງທີ່ລະນຶກ ຢູ່ໃນນະຄອນຫຼວງວຽງຈັນ.

**ເລື່ອງ :** ເຊີນເຂົ້າຮ່ວມການປະມູນລາຄາເຄື່ອງທີ່ລະນຶກ ຂອງ ທຄຕລ .

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ຂໍແຈ້ງມາຍັງບັນດາບໍລິສັດ ຫ້າງຮ້ານຕົວແທນຈຳໜ່າຍ ເພື່ອເຂົ້າຮ່ວມການປະມູນລາຄາ ທີ່ ທຄຕລ ຈະນຳໃຊ້ເປັນເຄື່ອງທີ່ລະນຶກໃຫ້ແກ່ລູກຄ້າ ຕາມລາຍລະອຽດລຸ່ມນີ້:

| ລ/ດ | ລາຍການ | ລາຍລະອຽດສິນຄ້າ | ຈຳນວນ |
|---|---|---|---|
| 1 | **ຊຸດ GIFT SET**<br>**1.** ຈອກແກ້ວ 2 ໜ່ວຍ<br>- ມີແຂບຄຳຢູ່ປາກຈອກ<br>- ສະກຣີນສີທອງ 01 ຈຸດ<br>**2.** ຄັນຮົ່ມ 1 ຂະໜາດ: 21 ນີ້ວ<br>- ສີແດງ-ຂາວ, ສະກຣີນ 6 ຈຸດ<br>- ປະເພດຜ້າ: 190T Polyester ເຄືອບ ກັນ UV<br>- ເສັ້ນຜ່າສູນກາງ : 36 ນີ້ວ<br>- ໂຄງເຫຼັກດຳ<br>- ດ້າມຈັບ : ພຼາສຕິກ , ປຸ່ມກົດມີເປີດ<br>- ສາຍຮັດ : ແບບຕິດ<br>- ຊອງໃສ່ຄັນຮົ່ມ: ຊອງຜ້າສີແດງ<br>**3.** ກັບເຈ້ຍແຂງສີແດງ.<br>**4.** ຖົງເຈ້ຍສີແດງ ພິມ 1 ສີ. | <br>ຮູບແບບຊຸດ Giftset<br>ຄັນຮົ່ມພັບ + ຈອກ 2 ໜ່ວຍ<br>ຮູບແບບກ່ອງ Giftset<br>ພ້ອມໃສ່ LOGO BCEL ສີຂາວ | **3.000 ຊຸດ** |
| 2 | **ຄັນຮົ່ມກ້ານສັ້ນ 02 ພັບ**<br>- ສີແດງ-ຂາວ, ສະກຣີນ 6 ຈຸດ<br>- ຄັນຮົ່ມຂະໜາດ: 21 ນີ້ວ<br>- ປະເພດຜ້າ: 190T Polyester ເຄືອບ ກັນ UV<br>- ເສັ້ນຜ່າສູນກາງ : 36 ນີ້ວ<br>- ໂຄງເຫຼັກດຳ<br>- ດ້າມຈັບ : ພຼາສຕິກ , ປຸ່ມກົດມີເປີດ<br>- ສາຍຮັດ : ແບບຕິດ<br>- ຊອງໃສ່ຄັນຮົ່ມ: ຊອງຜ້າສີແດງ |  | **5.000 ກ້ານ** |

| | | | |
|---|---|---|---|
| 3 | **ຄັນຮົ່ມກ້ານ ຍາວ**<br>- ສີແດງ-ຂາວ, ສະກຣີນ 6 ຈຸດ<br>- ຂະໜາດ: 28 ນີ້ວ<br>- ປະເພດຜ້າ: 190T Polyester ເຄືອບ ກັນ UV<br>- ເສັ້ນຜ່າສູນກາງ : 47 ນີ້ວ<br>- ໂຄງເຫຼັກດຳ<br>- ດ້າມຈັບ : ໂອໂຕ້ໂຟມນຸ່ມ<br>- ສາຍຮັດ : ແບບຕິດ<br>- ຊອງໃສ່ຄັນຮົ່ມຊອງຜ້າສີແດງ |  | **5.000 ກ້ານ** |
| 4 | **ຖົງເຈ້ຍ ທຄຕລ**<br>- ຂະໜາດ 28 cm x 12 cm x 35 cm<br>- ເຈ້ຍ 210 ແກຣມ ເຄືອບ PVC 1ໜ້າ.<br>- ພື້ນຮອງດ້ວຍເຈ້ຍແຂງໜາ.<br>- ຫູຫິ້ວເຊືອກແດງ 2 ເສັ້ນ.<br>- ພິມສີຕາມ Artwork. |  | **10.000 ຖົງ** |
| 5 | **ບິກ ທຄຕລ**<br>- Liquid Gel Ink.<br>- 0,7 mm. |   | **10.000 ກ້ານ** |
| 6 | **ປື້ມບັນທຶກ**<br>- ຂະໜາດ A5 ( ປົກໜັງ ໜ້າ+ຫຼັງ ສີແດງ. ປ້ຳນູນ 01 ຈຸດ )<br>- ເຈ້ຍປອນຂາວໜາ 80 ແກຣມ ຈຳນວນ 200 ໜ້າ (100 ໃບ) ບໍ່ລວມໜ້າປົກ , ດ້ານໃນພິມ ໂລໂກ້ ທຄຕລ.<br>- ການຫຸ້ມຫໍ່: 20 ຫົວ/ແກັດ. |  | **7.000 ຫົວ** |

➢ **ໝາຍເຫດ:** ສາມາດເຂົ້າມາເບິ່ງຕົວຢ່າງແທ້ ຫຼື ຫາກຕ້ອງການຟາຍຮູບເພີ່ມຕື່ມ ຫຼື VIDEO ຂອງເຄື່ອງຕົວຈິງສາມາດພົວພັນໄດ້ທີ່ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ສຳນັກງານໃຫຍ່ ຊັ້ນ 4 ຕຶກ C ແຕ່ວັນນີ້ 11/05/2023 ໃນໂມງລັດຖະການ.

- ຜູ້ສະໜອງສາມາດເຂົ້າຮ່ວມປະມູນທຸກລາຍການ ຫຼື ລາຍການໃດໜຶ່ງ ກໍ່ໄດ້, ສ່ວນການພິຈາລະນາແມ່ນ ທຄຕລ ຈະຄັດເລືອກເປັນແຕ່ລະລາຍການ.

- **ເງື່ອນໄຂຂອງຜູ້ສະໜອງທີ່ຕ້ອງການຍື່ນຊອງປະມູນຕ້ອງປະກອບເອກະສານ ດັ່ງນີ້:**

1. ປະກອບເອກະສານໃນນາມນິຕິບຸກຄົນ ທີ່ດຳເນີນທຸລະກິດກ່ຽວກັບສິ່ງພິມ ແລະ ດຳເນີນທຸລະກິດຢ່າງໜ້ອຍ 02 ປີຂຶ້ນໄປ ແລະ ໃຫ້ສຳເນົາໃບທະບຽນວິສາຫະກິດ, ໃບອະນຸຍາດດຳເນີນທຸລະກິດປະຈຳປີ, ໃບຢັ້ງຢືນການເສຍອາກອນຢ່າງໜ້ອຍ 2021 – 2022 .
2. ຜູ້ສະໜອງຕ້ອງລະບຸລາຍລະອຽດສິນຄ້າ ພ້ອມທັງລະບຸເງື່ອນໄຂຕ່າງໆໃຫ້ຄົບຖ້ວນ ແລະ ກົງກັບຄວາມຕ້ອງການໃນຕາຕະລາງຂ້າງເທິງນີ້, ແຫຼ່ງຜະລິດສິນຄ້າ , ລະບຸໄລຍະເວລາໃນການຮັບປະກັນ, ລະບຸໄລຍະການຜະລິດ, ຜົນງານຜ່ານມາທີ່ເຄີຍສະໜອງສິນຄ້າປະເພດດັ່ງກ່າວໃຫ້ພາກສ່ວນອື່ນ, ( ຕາມແບບຟອມ ຄັດຕິດ ແຈ້ງເຊີນ) .
3. ເອກກະສານເງື່ອນໄຂ ຂໍ້ 1 ແລະ ຂໍ້ 2 ແມ່ນ ສົ່ງຟາຍສະແກນເປັນ PDF ເຂົ້າມາທີ່ Email: procurement @bcel.com.la ແລະ ສິນຄ້າຕົວຢ່າງ ມາສົ່ງກ່ອນ ວັນທີ 25/05/2023 ເວລາ 11:00 ໂມງ ທີ່ພະແນກຫ້ອງການບໍລິຫານ-ການເງິນ ຊັ້ນ 4 ຕຶກ C.

- **<u>ເອກະສານຊອງທີ 2 (ປິດຊອງ)</u>**:

1. ທຄຕລ ຈະແຈ້ງສະເພາະຜູ້ທີ່ຜ່ານເງື່ອນໄຂ ຮອບທີ 01 ເທົ່ານັ້ນ ເພື່ອເຂົ້າມາຍື່ນຊອງລາຄາດ້ວຍຕົນເອງ ຫຼື ສົ່ງຜູ້ຕາງໜ້າເຂົ້າມາຮ່ວມໃນວັນຄານ, ທີ **08/06/2022 ເວລາ 09:00** ໂມງ. ສະນັ້ນ, ຜູ້ສະໜອງຈະຕ້ອງຖືຊອງລາຄາມາດ້ວຍຕົນເອງ ຫຼື ສົ່ງຜູ້ຕາງໜ້າເຂົ້າຮ່ວມທີ່ຫ້ອງປະຊຸມຊັ້ນ 05 ຕຶກ C.
2. ໃບສະເໜີລາຄາໃຫ້ລະບຸລາຄາ/ໜ່ວຍ ແລະ ລວມມູນຄ່າອາກອນທັງໝົດເປັນສະກຸນເງິນກີບໃຫ້ຄົບຖ້ວນ ພ້ອມທັງລະບຸມື້ໝົດກຳນົດເວລາໃນໃບສະເໜີລາຄາດັ່ງກ່າວ (Expire date) ຢ່າງໜ້ອຍ 20 ວັນລັດຖະການ.
3. ຜູ້ສະໜອງຕ້ອງວາງເງິນຄ້ຳປະກັນການປະມູນຕ່ຳສຸດ 2% ຂອງມູນຄ່າທັງໝົດ ໂດຍໜັງສືຄ້ຳປະກັນທີ່ອອກໂດຍທະນາຄານພາຍໃນປະເທດ **(ວັນໝົດອາຍຸໜັງສືຄ້ຳປະກັນຕ້ອງເຖິງ ວັນທີ 08/07/2023)** ຫຼື ແຊັກທີ່ວິຊາແລ້ວ (ທຄຕລ ບໍ່ຮັບເງິນສົດ), ພາຍຫຼັງປະກາດຜົນ ທຄຕລ ຈະສົ່ງໜັງສືຄ້ຳປະກັນດັ່ງກ່າວຄືນ.

- **<u>ໝາຍເຫດ</u>**:

1. ທຄຕລ ຂໍສະຫງວນສິດ ປະຕິເສດຜູ້ສະໜອງທີ່ປະກອບເອກະສານ ບໍ່ຄົບຖ້ວນ ຫຼື ບໍ່ຖືກຕ້ອງຕາມການກຳນົດຂ້າງເທິງ, ການຄັດເລືອກຜູ້ສະໜອງແມ່ນຈະຄັດເລືອກຈາກຫຼາຍເງື່ອນໄຂ (ບໍ່ໄດ້ຄັດເລືອກຈາກລາຄາພຽງຢ່າງດຽວ).
2. ການຊຳລະແມ່ນຈ່າຍເງິນງວດດຽວ 100% ຕາມມູນຄ່າສັ່ງຊື້ ພາຍຫຼັງໄດ້ຮັບເຄື່ອງຄົບຖ້ວນ ພ້ອມທັງໄດ້ຮັບການຢັ້ງຢືນຈາກພາກສ່ວນກ່ຽວຂ້ອງ ແລະ ກວດກາຄວາມຖືກຕ້ອງຈາກທັງສອງຝ່າຍ ພາຍໃນໄລຍະ 30 ວັນລັດຖະການ.

- **ເງື່ອນໄຂຂອງສັນຍາລະຫວ່າງ ທຄຕລ ແລະ ຜູ້ສະໜອງທີ່ຊະນະການປະມູນ:**
  - ຜູ້ຊະນະການປະມູນຕ້ອງໄດ້ຜະລິດສິນຄ້າຕົວຈິງ 01 ອັນ ທີ່ຖືກຕ້ອງຕາມ Spec ທີ່ ທຄຕລ ລະບຸ ມາຜ່ານຕາມ Artwork ທີ່ ທຄຕລ ກຳນົດ ພາຍໃນ 14 ວັນ ແລະ ຕ້ອງມີຄວາມສາມາດຈັດພິມຈຳນວນທັງໝົດສຳເລັດພາຍໃນ 20 ວັນລັດຖະການ ນັບຈາກມື້ຮອງຮັບແບບ ແລະ ໄດ້ຮັບໜັງສືສັ່ງຊື້.

- ຖ້າຜູ້ຊະນະການປະມູນປະຕິເສດການເຊັນສັນຍາ, ຜູ້ຊະນະການປະມູນຕ້ອງໄດ້ຈ່າຍຄ່າເສຍຫາຍໃຫ້ແກ່ ທຄຕລ ໃນອັດຕາ 2% ຂອງມູນຄ່າລວມທີ່ສະເໜີປະມູນ.
- ຜູ້ທີ່ຊະນະການປະມູນຈະໄດ້ເຊັນສັນຍາກັບ ທຄຕລ ແລະ ຄ່າທຳນຽມໃນການຈົດທະບຽນສັນຍາ ແມ່ນມອບໃຫ້ເປັນຄວາມຮັບຜິດຊອບຂອງຜູ້ສະໜອງ.

ດັ່ງນັ້ນ, ຈຶ່ງອອກແຈ້ງເຊີນມາຍັງທ່ານທີ່ມີຄວາມສົນໃຈເຂົ້າຮ່ວມຍື່ນຊອງປະມູນໃນຄັ້ງນີ້.

**ຜູ້ອຳນວຍການ**

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC

**ນ. ສາຍສະໝອນ ຈັນທະຈັກ**

ສອບຖາມຂໍ້ມູນເພີ່ມຕື່ມທີ່: ເບີຕິດຕໍ່ 021 213 200-414, E-mail: procurement@bcel.com.la

## (ຕົວຢ່າງ) ລາຍລະອຽດເອກະສານການປະມູນ (ກະລຸນາຕື່ມຂໍ້ມູນ ແລະ ເຊັນຢັ້ງຢືນ)

- ອີງຕາມໃບແຈ້ງປະມູນ ສະບັບເລກທີ ............/ທຄຕລ, ລົງວັນທີ ......................

| ລ/ດ | ຜູ້ສະໜອງ | ເງື່ອນໄຂ | | | | | | | | | ໝາຍເຫດ |
|---|---|---|---|---|---|---|---|---|---|---|---|
| | | ໃບທະບຽນວິສາຫະກິດ | ໃບຢັ້ງຢືນການເສຍອາກອນ 2020 | ໃບອະນຸຍາດດຳເນີນທຸລະກິດ 2021 | ໄລຍະເວລາໃນການດຳເນີນທຸລະກິດ | ຜົນງານຜ່ານມາ (ເຄີຍສະໜອງໃຫ້ພາກສ່ວນໃດແນ່) | ປະເພດ / ວັດສະດຸ / ຍີ່ຫໍ້ສິນຄ້າ | ປະເທດຜະລິດ | ການຮັບປະກັນສິນຄ້າ | ກຳນົດສົ່ງ (ວັນ) | |
| 1 | ບ/ສ……… | (xxx/ 02.01.2015) | (xxx/ 02.01.2015) | (xxx/ 02.01.2015) | …. ປີ | (ໃຫ້ລະບຸ) | | ປະເທດ....... | …. ປີ | …… | |

ໝາຍເຫດ: ຂໍ້ມູນທີ່ແຈ້ງຂ້າງເທິງນີ້ ເປັນຄວາມຈິງທຸກປະການ, ຖ້າມີຂໍ້ມູນຜິດພາດ ຂ້າພະເຈົ້າຂໍຮັບຜິດຊອບເອງທຸກປະການ.

ນະຄອນຫຼວງວຽງຈັນ, ວັນທີ ........................

ຜູ້ອຳນວຍການບໍລິສັດ

ຜູ້ປະສານງານບໍລິສັດ:

ຊື່:

ໂທ:

# Giftset BCEL 2023

## ຮູບແບບກ່ອງ Giftset Business




**ຮູບແບບຊຸດ Giftset**

ຄັນຮົ່ມພັບ + ຈອກ 2 ໜ່ວຍ




ຮູບແບບກ່ອງ Giftset

ພ້ອມໃສ່ LOGO BCEL ສີຂາວ

# ຮູບແບບ ຄັນຮົ່ມ ຍາວ-ພັບ







BCEL ທຄຕລ BCEL ທຄຕລ BCEL ທຄຕລ BCEL ທຄຕລ BCEL ທຄຕລ BCEL ທຄຕລ

# ຮູບແບບ ຖົງເຈ້ຍ

## ຮູບແບບຖົງເຈ້ຍ 2023

ດ້ານໜ້າ

ດ້ານຫຼັງ



# ຮູບແບບ ບິກ




**Pen BCEL**
Mockup
V.1

# ຮູບແບບ ປຶ້ມ




BCEL ທຄຕລ BCEL ທຄຕລ BCEL ທຄຕລ BCEL ທຄຕລ BCEL ທຄຕລ BCEL ທຄຕລ